**ບົດກ່າວເປີດ**

**ໂດຍ ທ່ານ ປອ ກິແກ້ວ ຈັນທະບູຣີ**

**ຮອງລັດຖະມົນຕີ, ກະຊວງແຜນການ ແລະ ການລົງທຶນ**

**ຕໍ່ກອງປະຊຸມໂຕະມົນ ປະຈຳປີ 2016**

**ຄັ້ງວັນທີ 24 ພະຈິກ 2016, ທີ່ ແຂວງ ວຽງຈັນ**

**------------**

ຮຽນ: - ທ່ານ ນາງສິງຄຳ ຄົງສະຫວັນ, ຮອງເຈົ້າແຂວງ ແຂວງ ວຽງຈັນ

- ທ່ານ ນາງ ຄາຣີນາ ອິມໂມເນັນ, ຜູ້ປະສານງານເຄືອຄາຍສະຫະປະຊາຊາດ ທັງເປັນຜູ້ຕາງໜ້າອົງການ ສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ
- ບັນດາທ່ານ ຜູ້ຕາງໜ້າຈາກສະຖານທູດ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ
- ບັນດາທ່ານ ລັດຖະມົນຕີຊ່ວຍວ່າການ, ຜູ້ຕາງໜ້າຈາກບັນດາກະຊວງຂະແໜງການ ແລະ ພະແນກການຕ່າງໆຂອງແຂວງ ວຽງຈັນ ແລະ ບັນດາຜູ້ຕາງໜ້າ ຈາກ 18 ແຂວງ ທົ່ວປະເທດ
- ທ່ານຍິງ ແລະ ທ່ານຊາຍ

ຂ້າພະເຈົ້າ, ໃນນາມຕາງໜ້າໃຫ້ລັດຖະບານແຫ່ງ ສປປ ລາວ, ຂໍສະແດງຄວາມຍິນດີ ແລະ ຕ້ອນຮັບອັນອົບອຸ່ນມາຍັງທູຕານຸທູດ, ຜູ້ຕາງໜ້າບັນດາອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ທີ່ໄດ້ໃຫ້ກຽດ ແລະ ເສຍສະລະເວລາອັນມີຄຸນຄ່າມາເຂົ້າຮ່ວມກອງປະຊຸມໂຕະມົນປະຈຳປີ 2016 ໃນມື້ນີ້ ຊຶ່ງດຳເນີນໄປພາຍໃຕ້ຫົວຂໍ້: ‘‘ເລັ່ງລັດຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VIII (2016-2020) ເພື່ອນຳພາປະເທດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ’’.

ຂ້າພະເຈົ້າ ຂໍຖືໂອກາດນີ້ ສະແດງຄວາມຊົມເຊີຍ ແລະ ຂອບໃຈຢ່າງສູງ ມາຍັງອົງການສະຫະປະຊາຊາດ ເພື່ອການພັດທະນາ ກໍ່ຄືບັນດາອົງການເຄືອຂ່າຍສະຫະປະຊາຊາດ ແລະ ຄູ່ຮ່ວມພັດທະນາຕ່າງໆ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ຮ່ວມມືຢ່າງໃກ້ຊິດ ກັບບັນດາກະຊວງຂະແໜງການກ່ຽວຂ້ອງ ໃນການກະກຽມໃຫ້ແກ່ກອງປະຊຸມໂຕະມົນໃນມື້ນີ້. ພ້ອມດຽວກັນນີ້, ຂໍສະແດງຄວາມຂອບໃຈ ມາຍັງອຳນາດການປົກຄອງຂອງແຂວງວຽງຈັນ ທີ່ໄດ້ເອື້ອອຳນວຍຄວາມສະດວກດ້ານສະຖານ ທີ່ ກໍ່ຄືການໃຫ້ຄວາມຮ່ວມມືປະສານສົມທົບໃນການຈັດກອງປະຊຸມຄັ້ງນີ້ ພ້ອມດ້ວຍການແລກປ່ຽນບົດຮຽນກ່ຽວກັບການພັດທະນາ ເສດຖະກິດ-ສັງຄົມພາຍໃນແຂວງ.

**ບັນດາທ່ານ ແຂກທີ່ມີກຽດ,**

**ທ່ານ ຍິງ ແລະ ທ່ານ ຊາຍ,**

ກອງປະຊຸມໂຕະມົນປະຈຳປີ 2016 ໃນຄັ້ງນີ້ ຖືເປັນອີກເຫດການໜຶ່ງທີ່ສຳຄັນ ເຊິ່ງນອກຈາກພວກເຮົາ ຈະໄດ້ຊຸ້ນຂ້ຽວສືບຕໍ່ຈັດຕັ້ງປະຕິບັດບັນດາຄາດໝາຍບູລິມະສິດຂອງຂະແໜງການ ເພື່ອໃຫ້ສາມາດບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ທີ່ຍັງບໍ່ທັນບັນລຸໄດ້ນັ້ນ, ແມ່ນຍັງເປັນປີເລີ່ມຕົ້ນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VIII (2016-2020) ຂອງລັດຖະບານ ແລະ ເປັນປີເລີ່ມຕົ້ນການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (SDGs) ຂອງສາກົນ.

ບັນດາທ່ານຄົງຮັບຊາບດີແລ້ວວ່າ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດສະບັບທີ່ 8 ນີ້ ແມ່ນຕ່າງຈາກສະບັບກ່ອນໆທີ່ຜ່ານມາ ເຊິ່ງເນື້ອໃນແມ່ນໄດ້ເນັ້ນເຖິງຜົນໄດ້ຮັບທີ່ເປັນຮູບປະທຳຫຼາຍຂຶ້ນທັງນີ້ກໍ່ເພື່ອຕອບສະໜອງໃຫ້ແກ່ການບັນລຸເປົ້າໝາຍຕ່າງໆໃນລະດັບພາກພື້ນ ແລະ ສາກົນ ໂດຍສະເພາະ ເປົ້າໝາຍການພັດທະນາແບບຍືນຍົງ ແລະ ອື່ນໆ. ສະນັ້ນ, ກອງປະຊຸມຂອງພວກເຮົາໃນມື້ນີ້ ກໍ່ຈະໄດ້ມີການສົນທະນາປຶກສາຫາລືກັນ ເຊິ່ງມີທັງໝົດ 4 ປະເດັນຫຼື 4 ຫົວຂໍ້ຫຼັກໆ ທີ່ຈະໄດ້ສົນທະນາແລກປ່ຽນ ແລະ ຊອກຮູ້ແນວທາງຈັດຕັ້ງປະຕິບັດ ເພື່ອໃຫ້ເກີດປະໂຫຍດສູງສຸດ ເປັນຕົ້ນ: ການເຊື່ອມສານເອົາບັນດາເປົ້າໝາຍການພັດທະນາແບບຍືນຍົງ ເຂົ້າໃນວາລະການພັດທະນາແຫ່ງຊາດ; ຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນງານຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ; ການຈັດ ຕັ້ງປະຕິບັດບັນດາຍຸດທະສາດ ວ່າດ້ວຍການເຕີບໂຕສີຂຽວ, ການປ່ຽນແປງຂອງດິນຟ້າອາກາດ ແລະ ການກຽມຄວາມພ້ອມເພື່ອຮັບມືກັບໄພພິບັດທາງທຳມະຊາດຕ່າງໆ ແລະ ການກະກຽມ ແລະ ຮັບຮອງແຜນດຳເນີນງານຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາ ທີ່ມີປະສິດທິຜົນ

**ບັນດາທ່ານ ແຂກທີ່ມີກຽດ,**

**ທ່ານ ຍິງ ແລະ ທ່ານ ຊາຍ,**

ຂ້າພະເຈົ້າ ຂໍຖືໂອກາດນີ້ແຈ້ງໃຫ້ບັນດາທ່ານຊາບວ່າ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ສົກປີ 2015-2016 ນີ້ ພວກເຮົາສາມາດບັນລຸເປົ້າໝາຍຫຼັກໆຕາມທີ່ວາງໄວ້, ໂດຍສະເພາະໃນຂອບເຂດທົ່ວປະເທດທົ່ວສັງຄົມແມ່ນສືບຕໍ່ມີສະຖຽນລະພາບ, ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ, ປະຊາຊົນບັນດາເຜົ່າມີຄວາມສາມັກຄີເປັນເປັກແຜ່ນ ແລະ ເປັນເຈົ້າການເຂົ້າຮ່ວມໃນຂະບວນການສ້າງສາພັດທະນາ ແລະ ປົກປັກຮັກສາປະເທດຊາດ. ໃນດ້ານເສດຖະກິດ, ເວົ້າລວມແລ້ວ ພື້ນຖານເສດຖະກິດແຫ່ງຊາດຂອງ ສປປ ລາວ ຍັງສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ລວມຍອດຜະລິດຕະພັນພາຍໃນ (GDP) ໝົດສົກປີຂະຫຍາຍຕົວປະມານ 7% (ຄາດຄະເນ ຫມົດປີ 2016), ອັດຕາເງິນເຟີ້ສະເລ່ຍ 1,35% (ຂອງ 11 ເດືອນ ປີ 2016), ຄ່າຂອງເງິນກີບ ແລະ ອັດຕາແລກປ່ຽນມີຄວາມໝັ້ນຄົງ. ເວົ້າລວມແລ້ວ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2015-2016 ເຖີງວ່າບາງຄາດໝາຍອາດບໍ່ບັນລຸ ແຕ່ກໍ່ມີຜົນສໍາເລັດໃນຫຼາຍດ້ານ ແລະພ້ອມທີ່ຈະມີມາດຕະການໃນການແກ້ໄຂບັນດາສິ່ງທ້າທາຍຕ່າງໆ ເປັນຕົ້ນແມ່ນສິ່ງທ້າທາຍດ້ານເສດຖະກິດ, ດ້ານໄພພິບັດ, ດ້ານການຄຸ້ມຄອງ ທັງໃນລະດັບມະຫາພາກ ກໍ່ຄືໃນລະດັບທ້ອງຖິ່ນ ແລະ ດ້ານການຈັດຕັ້ງປະຕິບັດຕິດຕາມການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນໄລຍະຜ່ານມາກໍ່ຄື ໃນ 4 ປີຕໍ່ໜ້າ ເພື່ອໃຫ້ຮັກສາໄດ້ຜົນສໍາເລັດທີ່ຜ່ານມາ ກໍ່ຄືການບຸກບືນເພື່ອນໍາພາປະເທດຊາດໃຫ້ຫຼຸດພົ້ນຈາກສະຖານະພາບດ້ອຍພັດທະນາ ພາຍໃນປີ 2020.

**ບັນດາທ່ານ, ທ່ານຍິງ ແລະ ທ່ານຊາຍ,**

ຜ່ານຂະບວນການກະກຽມໃຫ້ແກ່ກອງປະຊຸມໂຕະມົນປະຈໍາປີ 2016 ນີ້, ບັນດາກະຊວງຂະແໜງການ ແລະ ທ້ອງຖິ່ນ ພ້ອມດ້ວຍຄູ່ຮ່ວມພັດທະນາ ໄດ້ມີການຈັດຕັ້ງຂະບວນການປຶກສາຫາລື ໃນປະເດັນທີ່ຊຸ້ນຂ້ຽວ ເຊິ່ງມີທັງໝົດແມ່ນ 4 ຫົວຂໍ້ ແລະ ກໍ່ຈະມີການປຶກສາຫາລືເພີ່ມເຕີມໃນກອງປະຊຸມໃນມື້ນີ້, 4 ຫົວຂໍ້ດັ່ງກ່າວລວມມີ:

- ເປົ້າຫມາຍພັດທະນາ ແບບຍືນຍົງ SDG:

ລັດຖະບານ ແຫ່ງ ສປປ ລາວ ກໍາລັງຢູ່ໃນຂັ້ນຕອນ ແຕ່ງຕັ້ງຄະນະຊີ້ນໍາລະດັບຊາດ ໃນການຈັດຕັ້ງປະຕິບັດ ເປົ້າຫມາຍດັ່ງກ່າວ, ເຊິ່ງລັດຖະບານ ສປປລາວເຮົາໄດ້ຮັບຮອງເອົາບັນຫາກົດຂວາງການພັດທະນາຢູ່ ສປປລາວ ເຊິ່ງແມ່ນການເກັບກູ້ລະເບີດບໍ່ທັນແຕກ ມາເປັນເປົ້າຫມາຍທີ່ 18 ຂອງ ສປປລາວ ຈາກ 17 ເປົ້າຫມາຍຂອງສາກົນ. ພ້ອມດຽວກັນນັ້ນ ລັດຖະບານ ສປປ ລາວ ກໍ່ໄດ້ ມີການເຊື່ອມສານເອົາຕົວຊີ້ວັດ ຂອງ ເປົ້າຫມາຍສະຫະສະຫວັດເພື່ອການພັດທະນາ ພັດທະນາ (MDGs)

ທີ່ຍັງບໍ່ທັນບັນລຸ ກໍ່ຄື ເປົ້າຫມາຍພັດທະນາ ແບບຍືນຍົງ SDG ຈຳນວນ 65 ຕົວຊີ້ວັດ ເຊື່ອມເຂົ້າໃນ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ່ VIII.

- ວຽກງານການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ:

ລັດຖະບານ ແຫ່ງ ສປປ ລາວ ໄດ້ຖືເອົາວຽກງານການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ເປັນວຽກງານໜຶ່ງທີ່ເປັນບູລິມະສິດທີ່ສຳຄັນ ແລະ ໄດ້ເອົາໃຈໃສ່ຕໍ່ວຽກງານດັ່ງກ່າວຢ່າງເປັນປົກກະຕິຕໍ່ເນື່ອງ, ໄດ້ມີແຜນຍຸດທະສາດ, ມີແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ ແລະ ກໍ່ມີຄະນະກຳມະການແຫ່ງຊາດດ້ານໂພຊະນາການ ເພື່ອຮັບຜິດຊອບວຽກງານດັ່ງກ່າວ ຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ,ໄດ້ນຳໃຊ້ແບບວິທີການເຮັດວຽກແບບມີສ່ວນຮ່ວມຂອງຫຼາຍພາກສ່ວນຕໍ່ວຽກງານຄໍ້າປະກັນສະບຽງອາຫານ ແລະ ໂພຊະນະການ ແລະ ມາຮອດປະຈຸບັນ ພວກເຮົາ ກຳລັງຈັດຕັ້ງປະຕິບັດ

ເຊິ່ງໃນແຜນງານດັ່ງກ່າວ ແມ່ນໄດ້ກວມເອົາ 3 ຂະ ແໜງການຫຼັກ ຄື: ສາທາລະນະສຸກ, ສຶກສາ ແລະ ກະສິກຳ ເຊິ່ງແມ່ນການເຮັດວຽກຮ່ວມກັນໂດຍມີການວາງແຜນ, ການຈັດຕັ້ງປະຕິບັດ, ການປະເມີນຜົນຂອງຫລາຍພາກສ່ວນ ຕາມມາດຕະການແກ້ໄຂດ້ານໂພຊະນາການສະເພາະ ແລະ ປິ່ນອ້ອມທີ່ຈັດຕັ້ງປະຕິບັດໃນພື້ນທີ່ດຽວກັນ, ເປົ້າໝາຍດຽວກັນ ແລະ ໃນໄລຍະເວລາດຽວກັນ. ເຊິ່ງທັງສາມພາກສ່ວນກຳລັງມີການສ້າງແຜນງານ, ກິດຈະກຳ ແລະ ຕົວຊີ້ວັດຮ່ວມກັນເພື່ອເຮັດມີການພັດທະນາຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ. ແຕ່ໃນທ່າມກາງຄວາມຄືບໜ້າຂອງວຽກງານການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ກໍ່ຄືວຽກງານຕ່າງໆທີ່ປິ່ນອ້ອມ, ລັດຖະບານ ກໍ່ບໍ່ປາສະຈາກໄດ້ສິ່ງທີ່ຍັງທ້າທາຍຫຼາຍດ້ານ ໂດຍສະເພາະ ໃນການຈັດຕັ້ງປະຕິບັດເປົ້າ ໝາຍສະຫັດສະຫວັດດ້ານການພັດທະນາ ເຊັ່ນ: ບັນຫາການຂາດສານອາຫານຂອງເດັກ, ນໍ້າໜັກຫຼຸດມາດຕະຖານ, ເດັກເຕັ້ຍ, ການຄວບຄຸມອັດຕາການຕາຍຂອງເດັກລຸ່ມ 1 ປີ, ລຸ່ມ 5 ປີ, ອັດຕາການຕາຍຂອງແມ່, ການບໍລິການດ້ານສາທາລະນະສຸກ ແກ່ພໍ່ແມ່ປະຊາຊົນທີ່ຢູ່ຫ່າງໄກສອກຫຼີກ, ອັດຕາການເຂົ້າຮຽນສຸດທິ, ອັດຕາການຄ້າງຫ້ອງ, ການປະລະໂຮງຮຽນ ແລະ ອັດຕາການລອດເຫຼືອຮອດ ປໍ 5. ນອກຈາກນີ້, ລະເບີດບໍ່ທັນແຕກທີ່ຍັງຕົກຄ້າງ ຢູ່ຕາມໄຮ່ນາຮົ້ວສວນຂອງປະຊາຊົນ ໄດ້ສິ່ງຜົນກະທົບຕໍ່ການຂະຫຍາຍ ກໍ່ຄືການບຸກເບີກເນື້ອທີ່ທຳການຜະລິດສະບຽງອາຫານ, ເນື້ອທີ່ເພື່ອປຸກສ້າງ ແລະ ສ້າງເສດຖະກິດຄອບຄົວຂອງເຂົາເຈົ້າ. ສະນັ້ນ ທັງໝົດນີ້ ຈຶ່ງເປັນບັນຫາສຳຄັນ ທີ່ຈະຕ້ອງໄດ້ຮັບການເອົາໃຈໃສ່ແກ້ໄຂ ແລະ ຊອກຫາມາດຕະການເພື່ອຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເພື່ອສາມາດບັນລຸເປົ້າໝາຍພັດທະນາແບບຍືນຍົງ ພາຍໃນປີ 2030 ຂອງ ສປປ ລາວ.

- ການຈັດ ຕັ້ງປະຕິບັດບັນດາຍຸດທະສາດ ວ່າດ້ວຍການເຕີບໂຕສີຂຽວ, ການປ່ຽນແປງຂອງດິນຟ້າອາກາດ ແລະ ການກຽມຄວາມພ້ອມເພື່ອຮັບມືກັບໄພພິບັດທາງທຳມະຊາດຕ່າງໆ

ມີຄວາມຄືບໜ້າສົມຄວນ, ໃນນີ້ ໄດ້ເອົາໃຈໃສ່ປັບປຸງນິຕິກຳຈຳນວນໜຶ່ງ ເຊັ່ນ: ຮ່າງແຜນແມ່ບົດການນຳໃຊ້ທີ່ດິນແຫ່ງຊາດ, ຮ່າງດຳລັດວ່າດ້ວຍການຈັດສັນ ແລະ ວາງແຜນການນຳໃຊ້ທີ່ດິນ ແລະ ດຳເນີນການຈັດສັນການນຳໃຊ້ທີ່ດິນແບບຮອບດ້ານ ແລະມີສ່ວນຮ່ວມຂອງແຂວງ ( ຕົວຢ່າງ: ຢູ່ແຂວງຫລວງພະບາງ ແລະ ຢູ່ 6 ເມືອງ 6 ແຂວງ ແລະຈຳນວນ 40 ບ້ານ ເຊິ່ງປະເມີນຄວາມຄືບໜ້າໄດ້ປະມານ 10%, ສາມາດອອກໃບຕາດິນໃນຂອບເຂດ ທົ່ວປະເທດ ໄດ້ 50,45 ຕອນ ເທົ່າກັບ 84% ຂອງແຜນການປີ (ແຜນການແມ່ນ 60,000 ຕອນ), ສາມາດສັງລວມຂໍ້ມູນສຳມະໂນທີ່ດິນໄດ້ທັງໝົດ 421.877 ຕອນ ລື່ນແຜນການ 4 ເທົ່າ (ແຜນການ 7.000 ເຮັກຕາ) ປະຈຸບັນໄດ້ຈັດສັນ, ກຳນົດ ແລະຟື້ນຟູປ່າໄມ້ແບບທຳມະຊາດ ຢູ່ເຂດປ່າປົກປ້ອງ ແລະປ່າສະຫງວນ ໄດ້ 150,000 ເຮັກຕາ ເທົ່າກັບ 50% ຂອງແຜນປີ (ແຜນການແມ່ນ 300,000 ເຮັກຕາ) ສຳລັບການຟື້ນຟູປ່າໄມ້ ແມ່ນສາມາດປະຕິບັດໄດ້ 7,562 ເຮັກຕາ ລື່ນແຜນການ 8% (ແຜນການ 7000 ເຮັກຕາ). ສຳລັບ ການສຳຫລວດ ເກັບກຳຂໍ້ມູນ ແລະ ສ້າງແຜນທີ່ ທໍລະນີສາດ-ແຮ່ທາດ ມາດຕາ 1/200.000 ຂອງເຂດທົ່ວປະເທດ ແມ່ນສາມາດປະຕິບັດໄດ້ 66,41% ຂອງເນື້ອທີ່ທົ່ວປະເທດ ແລະ ໄດ້ປັບປຸງ ຕາໜ່າງສະຖານີອຸຕຸນິຍົມ 18 ສະຖານີ ໃນຂອບເຂດທົ່ວປະເທດ ສຳເລັດ 90%, ສະຖານີອຸທົກກະສາດ 8 ສະຖານີ ສຳເລັດ 70% ເພື່ອກະກຽມຄວາມພ້ອມ ແລະ ຫລຸດຜ່ອນ ຄວາມສ່ຽງ ຈາກໄພພິບັດຕ່າງໆ ແລະ ການປ່ຽນແປງດິນຟ້າອາກາດ.

- ການກະກຽມ ແລະ ຮັບຮອງແຜນດຳເນີນງານ ຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາ ທີ່ມີປະສິດທິຜົນ

ສືບຕໍ່ຜົນຂອງກອງປະຊຸມໂຕະມົນລະດັບສູງ ຄັ້ງທີ່ 12 ປະຈຳປີ 2015 ທີ່ລັດຖະບານ ສປປ ລາວ ຮ່ວມກັບບັນາຄູ່ຮ່ວມພັດທະນາ ໄດ້ເຊັນຮັບຮອງເອົາ ຖະແຫລງການ ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດ ທະນາ ທີ່ມີປະສິດທິຜົນ ເຊິ່ງໄດ້ເພີ້ມ ຈາກ 5 ຫຼັກການ ມາເປັນ 8 ຫຼັກການທີ່ໃນລະດັບສາກົນຮອງຮັບ ດັ່ງທີ່ ສປປລາວ ໄດ້ເຂົ້າຮ່ວມໃນລະດັບສາກົນ, ໂດຍສະເພາະຈາກຜົນຂອງກອງປະຊຸມ ວ່າດ້ວຍປະສິດທິຜົນຂອງການພັດທະນາ ທີ່ ບູຊານ ແລະ ກອງປະຊຸມລະດັບສູງຄັ້ງທຳອິດ ທີ່ປະເທດ ແມກຊິໂກ ວ່າດ້ວຍການເປັນຄູ່ຮ່ວມມືສາກົນເພື່ອການພັດທະນາທີ່ມີປະສິດທິຜົນ ແລະ ສປປລາວ ພ້ອມດ້ວຍຄູ່ຮ່ວມພັດທະນາ ກໍ່ໄດ້ຮັບຮອງເອົາຖະແຫຼງການວຽງຈັນວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ. ໃນລະດັບຊາດ, ກະຊວງແຜນການ ແລະ ການລົງທືນ

ໂດຍຮ່ວມກັບ ກະຊວງ ຂະແໜງການ ແລະ ຄູ່ຮ່ວມພັດທະນາ ກໍ່ໄດ້ນຳມາຜັນຂະຫຍາຍ ສ້າງເປັນແຜນດຳເນີນງານ ທີ່ມີຕົວຊີ້ວັດ ແລະ ການແບ່ງຄວາມຮັບຜິດຊອບການລະອຽດ ເພື່ອຈັດຕັ້ງປະຕິບັດຖະແຫລງການດັ່ງກ່າວໃຫ້ໄດ້ຕາມຄາດຫມາຍ ແຕ່ 2016-2025 ແລະ ໃນປີ 2016 ນີ້ ລັດຖະບານ ສປປ ລາວ ກໍ່ກຳລັງກະກຽມການເຂົ້າຮ່ວມ ປະຊຸມລະດັບສູງ ຄັ້ງທີ່ 2 ກ່ຽວກັບການເປັນຄູ່ຮ່ວມສາກົນ ເພື່ອການຮ່ວມມືເພື່ອການພັດທະນາ ທີ່ມີປະສິດທິຜົນ ໃນທ້າຍເດືອນ ພະຈິກ 2016 ນີ້ ທີ່ປະເທດ ສາທາລະນະລັດ ເຄນຢາ. ພ້ອມດ່ຽວກັນນີ້ ໃນລະດັບຊາດ, ກໍ່ໄດ້ມີການເອົາໃຈໃສ່ໃນການປັບປຸງວຽກງານການປະສານງານ ແລະ ການຄຸ້ມຄອງໃຫ້ເຂັ້ມແຂງວອ່ງໄວມີປະສິດທິພາບ ໂດຍສະເພາະແມ່ນການປັບປຸງພາລະບົດບາດຂອງແຕ່ລະພາກສ່ວນ ກໍ່ຄືການປັບປຸງນິຕິກຳ ເຊັ່ນການປັບປຸງດຳລັດ 75/ນຍ, ວ່າດ້ວຍການນຳໃຊ້ການຊ່ວຍເຫລືອທາງການເພື່ອການພັດທະນາ, ການປັບປຸງດຳລັດຕ່າງໆ ເພື່ອແບ່ງຄວາມຮັບຜິດຊອບ ໃຫ້ລະອຽດ ຈະແຈ້ງຂຶ້ນຕື່ມ ເຊິ່ງ ຈະໃຫ້ສາມາດປະຕິບັດໄດ້ໄວໃນປີ 2017 ນີ້.

ເພື່ອເຮັດໃຫ້ແຜນງານ ຂ້າງເທິງນີ້ ລວມທັງບັນດາເປົ້າໝາຍ SDGs ຕ່າງໆ ໄດ້ຮັບການຈັດຕັ້ງປະຕິບັດໄປຢ່າງຖືກຕ້ອງ ແລະ ສອດຄ່ອງ ຕາມນະໂຍບາຍການພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ກໍ່ຄື ວ່າລະຂອງການພັດທະນາ ຂອງສາກົນໃນ SDGs, ມັນຮຽກຮ້ອງໃຫ້ທຸກພາກສ່ວນທຸກຂະແໜງການທີ່ກ່ຽວຂ້ອງຢູ່ ຂັ້ນສູນກາງ ແລະ ທ້ອງຖິ່ນ ລວມທັງບັນດາຄູ່ຮ່ວມພັດທະນາ ຕ້ອງໄດ້ນຳເອົາແຜນປະຕິບັດງານຂອງເປົ້າຫມາຍຕ່າງໆ ເຂົ້າໃນແຜນງົບປະມານປະຈຳປີຂອງຕົນ ເພື່ອສາ ມາດ ຈັດຕັ້ງປະຕິບັດໄດ້ຢ່າງປົກກະຕິຕໍ່ເນື່ອງ ແລະ ມີຜົນສຳເລັດ.

ຂ້າພະເຈົ້າໃນນາມປະທານຮ່ວມກອງປະຊຸມໃນມື້ນີ້ ຈຶ່ງສະເໜີມາຍັງທຸກທ່ານ ບໍ່ວ່າຈະເປັນຜູ້ຕາງໜ້າຈາກຂັ້ນສູນກາງ ກໍ່ຄື ຈາກທ້ອງຖິ່ນ ແລະ ບັນດາຄູ່ຮ່ວມພັດທະນາ, ຜູ້ຕາງໜ້າຈາກອົງການຈັດຕັ້ງສາກົນຕ່າງໆ ກໍ່ຄືຜູ້ຕາງໜ້າຈາກພາກສ່ວນອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ (NGO) ພາຍໃນ ແລະ ຕ່າງປະເທດ ລວມທັງສະມາຄົມທີ່ບໍ່ຫວັງຜົນກຳໄລ (NPA) ຈົ່ງຊ່ວຍປະກອບຄຳຄິດເຫັນທີ່ສ້າງສັນ, ແລກປ່ຽນບົດຮຽນ ແລະ ຂໍ້ສະເໜີຕ່າງໆເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ໄດ້ຮັບຜົນດີ ແລະ ສາມາດບັນລຸໄດ້ເປົ້າໝາຍຕາມກຳນົດເວລາ.

ຂ້າພະເຈົ້າເຊື່ອໝັ້ນວ່າ ຜ່ານການປຶກສາຫາລື ແລະ ແລກປ່ຽນຄຳຄິດເຫັນຕ່າງໆ ໃນກອງປະຊຸມຄັ້ງນີ້ ບັນດາຄູ່ຮ່ວມພັດທະນາ ຈະເຫັນໄດ້ຄວາມຈຳເປັນ ແລະ ຄວາມຕ້ອງການຕ່າງໆ ຕໍ່ການຈັດຕັ້ງປະຕິບັດເປົ້າໝາຍ ການພັດທະນາແບບຍືນຍົງແລະແຜນພັດທະນາແຫ່ງຊາດ.

ອີກເທື່ອໜຶ່ງ ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈ ແລະ ຂໍອວຍພອນໄຊ ແດ່ແຂກທີ່ມີກຽດທຸກໆທ່ານຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມສຸກ ແລະ ປະສົບຜົນສໍາເລັດໃນໜ້າທີ່ວຽກງານຂອງທ່ານ ແລະ ໃນໂອກາດອັນສະຫງ່າລາສີນີ້ ຂ້າພະເຈົ້າຂໍກ່າວເປີດກອງປະຊຸມຢ່າງເປັນທາງການ.

**ຂໍຂອບໃຈ.**